ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ເອກອັກຄະລັດຖະທູດ ສ. ເຢຍລະມັນ ແລະ ອິດສະຕຣາລີ ປະຈຳ ສປປ ລາວ ເຂົ້າຢ້ຽມຜິບປະກັບທ່ານຜູ້ວ່າການ ທຫລ





ໃນຕອນບ່າຍຂອງວັນທີ 10 ມີນາ 2020 ຢູ່ທີ່ທະນາຄານແຫ່ງ ສປປ ລາວ ໄດ້ມີການເຂົ້າຢ້ຽມຂໍ່ານັບ ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການ ທຫລ ຂອງທ່ານ Jen Lütkenherm, ເອກອັກຄະລັດຖະທູດ ສ. ເຢຍລະມັນ ປະຈຳ ສປປ ລາວ ແລະ ທ່ານ Jean-Bernard Carrasco, ເອກອັກຄະລັດຖະທູດ ອິດສະຕຣາລີ ປະຈຳ ສປປ ລາວ ພ້ອມດ້ວຍຄະນະ ຈຳນວນທັງໝົດ 7 ທ່ານ.

ຈຸດປະສົງຂອງການເຂົ້າຢ້ຽມຂໍ່ານັບຂອງຄະນະດັ່ງກ່າວໃນຄັ້ງນີ້ ແມ່ນເພື່ອປຶກສາຫາລືກ່ຽວກັບບັນຫາຄົງຄ້າງ ແລະ ສິ່ງທ້າທາຍໃນການດຳເນີນກິດຈະກຳຕ່າງໆ ຂອງໂຄງການການເງິນຈຸລະພາກໃນຂົງເຂດຊົນນະບົດ ແລະ ການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກ (MRA-AFP) ໄລຍະທີ V ແລະ ວິທີແກ້ໄຂບັນຫາດັ່ງກ່າວ. ນອກນີ້, ກໍ່ຍັງຖືໂອກາດໃນການປຶກສາຫາລືກ່ຽວກັບທິດທາງໃນຕໍ່ໜ້າ ເພື່ອເຮັດໃຫ້ການປະຕິບັດໂຄງການດັ່ງກ່າວມີຄວາມຍືນຍົງ ພາຍຫຼັງທີ່ສິ້ນສຸດໂຄງການ.

**#ຂ່າວ ແລະ ພາບ ໂດຍ: ນາງ ປາໄນ ພັນທະລາ**